#TEAMEUROPE

#TEAMEUROPE

# ກອງປະຊຸມຄະນະຊີ້ນຳການຈັດຕັ້ງປະຕິບັດ ຂອງ ແຜນງານ ການຮ່ວມມື ລະຫວ່າງ ທີມເອີຣົບ ແລະ ສປປ ລາວ ເພື່ອເພີ່ມທະວີການຄ້າ, ການລົງທຶນ ແລະ ການເຊື່ອມໂຍງແບບຍືນຍົງ ແລະ ທົ່ວເຖິງ ຂອງຂະແໜງກະສິກຳ ແລະ ປ່າໄມ້ (TICAF) - ອົງປະກອບ ປ່າໄມ້/ ໂຄງການປົກປັກຮັກສາ ແລະ ນຳໃຊ້ ລະບົບນິເວດ ປ່າໄມ້ ແລະ ຊີວະນາໆພັນ ໃນ ສປປ ລາວ (ໂຄງການ ProFEB)

ວັນທີ 23 ມັງກອນ 2025, ໂຮງແຮມ ລາວ ພລາຊາ, ນະຄອນຫຼວງວຽງຈັນ

# Technical Steering Committee of the TICAF – Forest component / Protection and Sustainable Use of Forest Ecosystems and Biodiversity in Laos (ProFEB)

23 January 2025, Lao Plaza Hotel, Vientiane Capital

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

ຮ່ວມໃຫ້ທຶນໂດຍ ສະຫະພາບ ເອີຣົບ

ຈັດຕັ້ງປະຕິບັດໂດຍ
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ວາລະປະຊຸມ

1. ສະພາບລວມຂອງ ProFEB
2. ນະໂຍບາຍດ້ານປ່າໄມ້
3. ການອະນຸລັກຊີວະນາໆພັນ
4. ການສຶກສາ ແລະ ຕ່ອງໂສ້ມູນຄ່າເພີ່ມ
5. ການຟື້ນຟູພູມີທັດປ່າໄມ້







#TEAMEUROPE

# ແຜນງານການຮ່ວມມືລະຫວ່າງທີມຢູໂຣບກັບ ສປປ ລາວເພື່ອການຍົກລະດັບການຄ້າ, ການລົງທຶນ ແລະ ການເຊື່ອມໂຍງ ແບບຍືນຍົງ ແລະ ທົ່ວເຖິງ ໃນຂະແໜງກະສິກຳ ແລະ ປ່າໄມ້ (TICAF)

| | |
|---|---|
| ຊື່ແຜນງານ | **ແຜນງານການຮ່ວມມືລະຫວ່າງທີມຢູໂຣບກັບ ສປປ ລາວເພື່ອການຍົກລະດັບການຄ້າ, ການລົງທຶນ ແລະ ການເຊື່ອມໂຍງ ແບບຍືນຍົງ ແລະ ທົ່ວເຖິງ ໃນຂະແໜງກະສິກຳ ແລະ ປ່າໄມ້ (TICAF)** |
| ຊື່ໂຄງການ | **TICAF – ອົງປະກອບປ່າໄມ້** / ການປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດປ່າໄມ້ ແລະ ຊີວະນາໆພັນແບບຍືນຍົງ **(ProFEB)** |
| ອົງກອນຫຼັກສຳລັບການຈັດຕັ້ງປະຕິບັດ | ກະຊວງກະສິກຳ ແລະ ປ່າໄມ້ (MAF) |
| ສະໜັບສະໜູນໂດຍ | ກະຊວງຮ່ວມມືດ້ານເສດຖະກິດ ແລະ ການພັດທະນາປະເທດເຢຍລະມັນ (BMZ) |
| ຈັດຕັ້ງປະຕິບັດໂດຍ | Deutsche Gesellschaft für Internationale Zusammenarbeit (GIZ) GmbH |
| ໃຫ້ທຶນຮ່ວມໂດຍ | ສະຫະພາບຢູໂຣບ |
| ໄລຍະໂຄງການ | 04/2024 – 03/2027 (06/2027) ມີການປັບໄລຍະເວລາສຳລັບການກະກຽມ |
| ງົບປະມານ | 11 ລ້ານ ຢູໂຣ (EU) + 11,9 ລ້ານ ຢູໂຣ(BMZ) + 7 ລ້ານ ຢູໂຣ (BMZ ໃນປີ 24/25) |

#TEAMEUROPE

# ພາບລວມຂອງ
# ການປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດປ່າໄມ້ ແລະ ຊີວະນາໆພັນແບບຍືນຍົງ (ProFEB)

## ໂຄງການຮ່ວມມືສອງຝ່າຍ

**ສະໜັບສະໜູນໂດຍ:** ກະຊວງຮ່ວມມືດ້ານເສດຖະກິດ ແລະ ການພັດທະນາປະເທດເຢຍລະມັນ (BMZ)
**ຮ່ວມໃຫ້ທຶນໂດຍ:** **ສະຫະພາບຢູໂຣບ**
**ເຂດທີ່ຕັ້ງໂຄງການ:** **ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງຫຼວງພະບາງ, ແຂວງ ຫົວພັນ, ອຸດົມໄຊ, ໄຊຍະບູລີ, ແລະ ຄຳມ່ວນ**
**ອົງກອນນຳໜ້າຈັດຕັ້ງປະຕິບັດ: ກະຊວງກະສິກຳ ແລະ ປ່າໄມ້ (ປມ), ກົມກວດກາປ່າໄມ້ (ກປມ)**
**PN:** **20.2030.3**
**ໄລຍະໂຄງການ:** **ພຶດສະພາ 2021 - ມີນາ 2027**
**ງົບປະມານ:** **21,9 ລ້ານ EUR**

- ຜົນໄດ້ຮັບ 1:ນະໂຍບາຍດ້ານປ່າໄມ້
- ຜົນໄດ້ຮັບ 2: ການອະນຸລັກຊີວະນາໆພັນ
- ຜົນໄດ້ຮັບ 3: ການສຶກສາ
- ຜົນໄດ້ຮັບ 4: ການຟື້ນຟູ ພູມີທັດປ່າໄມ້
- ຜົນໄດ້ຮັບ 5: ຕ່ອງໂສ້ມູນຄ່າເພີ່ມ

| ແຜນງານທີ່ຕັດຕັ້ງປະຕິບັດໃນຫຼາຍປະເທດພາຍໃຕ້ ProFEB | | | ໂຄງການລະດັບພາກພື້ນ |
|---|---|---|---|
| ຄູ່ຮ່ວມງານຕ້ານອາຊະຍາກຳສັດປ່າໃນທະວີບອາຟະຣິກາ ແລະ ເອເຊຍ (LP) | ການລິເລີ່ມສຳລັບຕ່ອງໂສ້ການສະໜອງຜະລິດຕະພັນກະສິກຳແບບຍືນຍົງ (SV INA): EUDR ການເຂົ້າຮ່ວມໃນເອເຊຍຕາເວັນອອກສ່ຽງໃຕ້ | ການສ້າງຄວາມເຂັ້ມແຂງແກ່ການຈັດຕັ້ງປະຕິບັດພາຍວຽກງານຊີວະນາໆພັນໃນປະເທດເພື່ອເປົ້າໝາຍດ້ານຊີວະນາໆພັນໂລກ (ການຈັດຕັ້ງປະຕິບັດ GBF) | ການສ້າງຄວາມເຂັ້ມແຂງການຮ່ວມມືການຄ້າໃນອາຊຽນສຳລັບຜະລິດຕະພັນກະສິກຳ (ACTFor) |
| **PN:** 21.2203.4-101.00<br>**ຜູ້ຮັບຜິດຊອບ:** ຈູນລະມະນີ ມະນີເພັດ ຈູນລະມະນີ (DV)<br>**ໄລຍະໂຄງການ:** 05/22 – 05/25<br>**ງົບປະມານ:** 200.000 EUR + 100.000 EUR | **PN:** 18.01281-314.00<br>**ຜູ້ຮັບຜິດຊອບ:** Tobias Goedde (DV)<br>**ໄລຍະໂຄງການ:** 06/23 – 05/25<br>**ງົບປະມານ:** 500.000 EUR | **PN:** 22.2213.1-105.00<br>**ຜູ້ຮັບຜິດຊອບ :** Carolin Frisch (DV)<br>**ໄລຍະໂຄງການ:** 10/23 – 06/26<br>**ງົບປະມານ:** 1 ລ້ານ EUR | **PN:** 2022.2102.6<br>**ຜູ້ຮັບຜິດຊອບ :** Maria-Verena Spohler (AV) / Barbara Goncalves<br>**ໄລຍະໂຄງການ:** 09/24 – 07/27<br>**ງົບປະມານ:** 3 ລ້ານ EUR |

#TEAMEUROPE

จุดปะสົງສະເພາະຂອງແຜນດຳເນີນງານແມ່ນເພື່ອ ເພີ່ມການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ, ໂດຍສະເພາະແມ່ຍິງ, ໃນວຽກງານຕ່ອງໂສ້ສ້າງ ມູນຄ່າເພີ່ມໃນການນຳໃຊ້ ແລະ ອະນຸລັກປ່າໄມ້ ແບບຍືນຍົງ.



| | |
|---|---|
| **ຈຸດປະສົງສະເພາະ ຕົວຊີ້ວັດ1**<br>ຈຳນວນ ເອກະສານດ້ານນະໂຍບາຍ ທີ່ສະໜັບສະໜູນຂະແໜງການ ປ່າໄມ້ ແບບມີສ່ວນຮ່ວມ, ເປັນມິດຕໍ່ຊີວະນາໆພັນ ແລະ ມີຄວາມ ອຸດົມສົມບຸນ ໄດ້ສ້າງ ຫຼື ຖືກຮັບຮອງ. | |
| **ຈຸດປະສົງສະເພາະ ຕົວຊີ້ວັດ 2**<br>ເນື້ອທີ່ປ່າໄມ້ (ເຮັກຕ່າ) ທີ່ມີການປູກ, ມີການຟື້ນຟູ ຫຼື ມີການ ອະນຸລັກຮ່ວມກັບຜູ້ຜະລິດລາຍນ້ອຍ / ຊາວບ້ານ (ລວມທັງບໍລິສັດທີ່ ປູກປ່າ ແລະ ການລິເລີ່ມອື່ນໆຮ່ວມກັບພາກເອກະຊົນ) | |
| **ຈຸດປະສົງສະເພາະ ຕົວຊີ້ວັດ 3**<br>ຈຳນວນຈູນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດ ກາງ (MSMEs) ທີ່ໄດ້ຢືນຢັນໃຫ້ຮູ້ວ່າມີການສ້າງ ມູນຄ່າເພີ່ມ ທີ່ ເພີ່ມຂຶ້ນ | |

#TEAMEUROPE

# ບັນດາແຂວງ



# ການຮ່ວມໃຫ້ທຶນຈາກ BMZ ແລະ EU



# ບາດກ້າວຕໍ່ໄປ

**EU 1. ດັດແກ້ສັນຍາ (Q1/25)**
(ໄລຍະ 05/24 – 06/27)
+ ການລວມຕົວຊີ້ວັດຂອງ BMZ ແລະ EU ເປັນຕົວຊີ້ວັດ ດຽວກັນ



#TEAMEUROPE

# ແນວຄວາມຄິດ ໂຄງສ້າງພະນັກງານ



#TEAMEUROPE

# ໂຄງຮ່າງການຈັດຕັ້ງຂອງຄະນະຊີ້ນໍາ

| ຮູບການຊີ້ນໍາ | ສະມາຊິກ | ກອງປະຊຸມ | ຈຸດປະສົງ |
|---|---|---|---|
| **ກອງປະຊຸມຄະນະຊີ້ນໍາ ດ້ານຍຸດທະສາດຂອງ TICAF** | ຜູ້ຕາງໜ້າຂັ້ນສູງຈາກ MAF, MPI, MoF, MoHA, ບັນດາແຂວງ, ຄະນະເຮັດວຽກຂອງ EU, BMZ, GIZ, AfD ແລະ ກະຊວງອື່ນທີ່ກ່ຽວຂ້ອງ | 1 ຄັ້ງຕໍ່ປີ | ເກັບກໍາຄວາມຄືບໜ້າ ແລະ ສິ່ງທ້າທາຍ, ປຶກສາຫາລືດ້ານນະໂຍບາຍ ແລະ ໃຫ້ຄໍາແນະນໍາແບບເປັນຍຸດທະສາດ |
| **ຄະນະຊີ້ນໍາ TICAF / ProFEB ດ້ານວິຊາການປ່າໄມ້** | MAF, MPI, MoF, MoHA, ບັນດາແຂວງ, ຄະນະເຮັດວຽກຂອງ EU, BMZ, GIZ, AfD ແລະ ກະຊວງອື່ນທີ່ກ່ຽວຂ້ອງ. | 2 ຄັ້ງຕໍ່ປີ | ປຶກສາຫາລືດ້ານວິຊາການກ່ຽວກັບຄວາມຄືບໜ້າ ສະເພາະ ແລະ ສິ່ງທ້າທາຍຂອງຂະແໜງການ ແລະ ເອົາເຂົ້າໃນວາລະການປຶກສາຫາລືດ້ານນະໂຍບາຍ |
| **ທີມງານປະສານງານ ProFEB** | ຜູ້ປະສານງານໂຄງການ & ຫົວໜ້າໂຄງການ GIZ | ປະຈໍາໄລຍະຍາວ | ຮັບປະກັນການປະສານງານລວມ ແລະ ປະຕິບັດຕາມແຜນດໍາເນີນງານ, ວຽກປະຈໍາວັນຂອງແຜນດໍາເນີນງານ |
| ການຊີ້ນໍາສະເພາະດ້ານຜົນການດໍາເນີນງານ ຫຼື **ດ້ານຄວາມຄືບໜ້າ** | ຕົວຢ່າງ: ຄະນະຊີ້ນໍາດ້ານ UNESCO, ຄະນະຊີ້ນໍາດ້ານ FLEGT-VPA NSC, ແລະ ອື່ນໆ. | ອີງຕາມຄວາມຄືບໜ້າສະເພາະ | ອີງຕາມຄວາມຄືບໜ້າສະເພາະ |

ການ ຮ່ວມມື ເຢຍລະມັນ DEUTSCHE ZUSAMMENARBEIT

ຮ່ວມໃຫ້ທຶນໂດຍ ສະຫະພາບ ເອີຣົບ

ຈັດຕັ້ງປະຕິບັດໂດຍ giz

#TEAMEUROPE

# ຂອບເຂດກອບເວລາ



#TEAMEUROPE

# ວາລະປະຊຸມ

1. ສະພາບລວມຂອງ ProFEB
2. ນະໂຍບາຍດ້ານປ່າໄມ້
3. ການອະນຸລັກຊີວະນາໆພັນ
4. ການສຶກສາ ແລະ ຕ່ອງໂສ້ມູນຄ່າ
5. ການຟື້ນຟູພູມີທັດປ່າໄມ້







# ນະໂຍບາຍດ້ານປ່າໄມ້
# ຜົນງານທີ່ບັນລຸໄດ້

**ວຽກລະດັບສາກົນ: ການເຂົ້າຮ່ວມຂອງ EUDR**

- ✓ ການເຮັດວຽກພາກສະໜາມ 7 ຄັ້ງ
- ✓ ການສຶກສາຄົ້ນຄວ້າ 2 ຄັ້ງ
- ✓ ຕອບຄຳຖາມທີ່ມັກຈະຖາມຫຼາຍເປັນພາສາອັງກິດ ແລະ ລາວ
- ✓ ເອກະສານຂໍ້ທັດຈິງ

**ຈຸດປະສົງສະເພາະ ຕົວຊີ້ວັດ1**

ຈຳນວນ ເອກະສານດ້ານນະໂຍບາຍ ທີ່ສະໜັບສະໜູນຂະແໜງການປ່າໄມ້ ແບບມີສ່ວນຮ່ວມ, ເປັນມິດຕໍ່ຊີວະນາໆພັນ ແລະ ມີຄວາມອຸດົມສົມບູນ ໄດ້ສ້າງ ຫຼື ຖືກຮັບຮອງ.

ຈຳນວນເອກະສານເບື້ອງຕົ້ນ: 0

ເປົ້າໝາຍ: 4

**ຜົນງານທີ່ບັນລຸໄດ້:**

✓ ໄດ້ໃຫ້ການແນະນຳ ກ່ຽວກັບ ພັດທະນາ ແນວຄວາມຄິດຂອງ TLAS ຂອງສປປ ລາວ
- ໄດ້ຈັດກອງປະຊຸມຄະນະຮັບຜິດຊອບດ້ານວິຊາການ (TWG)ໃນເດືອນຕຸລາ, ທັນວາ (ທີ່ແຂວງວຽງຈັນ) 2024

✓ ໄດ້ໃຫ້ການແນະນຳ ກ່ຽວກັບ ການພັດທະນານິຕິກຳ ລະບົບ TLAS ຂອງສປປ ລາວ
- ຈັດກອງປະຊຸມ TWG ກ່ຽວກັບ TLD3 ໃນເດືອນສິງຫາ 2024, ຈັດກອງປະຊຸມTWG ກ່ຽວກັບ ທຸກໆTLDs ໃນເດືອນຕຸລາ 2024

✓ ໄດ້ໃຫ້ການແນະນຳ ກ່ຽວກັບ ຂໍ້ຕົກລົງ "ການຄຸ້ມຄອງໄມ້ຍືດ ແລະ ໄມ້ຮິບ, ຜະລິດຕະພັນໄມ້ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ (NTFPs)"
- ກອງປະຊຸມປຶກສາຫາລື ດ້ານວິຊາການຫຼາຍຄັ້ງໃນເດືອນເມສາ (ແຂວງວຽງຈັນ), ກໍລະກົດ (ບໍລິຄຳໄຊ), ຕຸລາ (ຄຳມ່ວນ) 2024
- ກອງປະຊຸມຄະນະຊີ້ນຳ ແລະ ຄະນະສ້າງຂໍ້ຕົກລົງ (SDC) ໃນເດືອນກໍລະກົດ (ວຽງຈັນ), ຕຸລາ (ບໍລິຄຳໄຊ) 2024

# ນະໂຍບາຍດ້ານປ່າໄມ້
# ຜົນງານທີ່ບັນລຸໄດ້

**ຜົນໄດ້ຮັບ 1:** ວຽກງານການບໍລິຫານຄຸ້ມຄອງປ່າໄມ້ ແບບມີສ່ວນຮ່ວມ, ບົນພື້ນຖານອີງໃສ່ບົດບາດຍິງ-ຊາຍ ແລະ ສິດທິມະນຸດ, ເປັນມິດກັບຊີວະນາໆພັນ ແລະ ການປາສະຈາກການທຳລາຍປ່າໄມ້ ໃນຂະແໜງການປ່າໄມ້ ໄດ້ຮັບການປັບປຸງ.

➢ **ຕົວຊີ້ວັດ ຜົນໄດ້ຮັບ 1.1**: ໄດ້ນຳໃຊ້ຮູບແບບຂອງການປຶກສາຫາລືດ້ານນະໂຍບາຍກັບຫຼາຍຂະແໜງການ (EU) ເພື່ອຊຸກຍູ້ການບໍລິຫານຄຸ້ມຄອງປ່າໄມ້.

- ຈຳນວນຮູບແບບເບື້ອງຕົ້ນ: 0
- ເປົ້າໝາຍ: 1 ຮູບແບບ

**ຜົນງານທີ່ບັນລຸໄດ້:**

✓ ໄດ້ວິເຄາະຮູບແບບຂອງການປຶກສາຫາລືທີ່ມີໃນປະຈຸບັນ ແລະ ກຳນົດບັນດາກຸ່ມ ແລະ ພາກສ່ວນທີ່ກ່ຽວຂ້ອງ ແລະ ໄດ້ຮ່າງແນວຄວາມຄິດຂອງຮູບແບບຂອງການປຶກສາຫາລືເພື່ອໃຫ້ການສະໜັບສະໜູນ

✓ ມີທ່າແຮງ ແລະ ໂອກາດທີ່ຈະເປັນປະທານຮ່ວມ ແລະ ປະກອບສ່ວນໃຫ້ແກ່ຄະນະວິຊາການຍ່ອຍຂອງຂະແໜງການປ່າໄມ້ (FSSWG)



# ນະໂຍບາຍດ້ານປ່າໄມ້
# ຜົນງານທີ່ບັນລຸໄດ້

- **ຜົນໄດ້ຮັບ 1:** ວຽກງານການບໍລິຫານຄຸ້ມຄອງປ່າໄມ້ ແບບມີສ່ວນຮ່ວມ, ບົນພື້ນຖານອີງໃສ່ບົດບາດຍິງ-ຊາຍ ແລະ ສິດທິມະນຸດ, ເປັນມິດກັບຊີວະນາໆພັນ ແລະ ການປາສະຈາກການທໍາລາຍປ່າໄມ້ ໃນຂະແໜງການປ່າໄມ້ ໄດ້ຮັບການປັບປຸງ.

➢ **ຕົວຊີ້ບອກຜົນໄດ້ຮັບ 1.2**: ຈໍານວນວິທີການແກ້ໄຂບັນຫາທີ່ເປັນອຸປະສັກຕໍ່ການພັດທະນາ ບາງຕ່ອງໂສ້ມູນຄ່າທຸລະກິດໄມ້ ແລະ ເຄື່ອງປ່າຂອງດົງ ໄດ້ຮັບການພັດທະນາໂດຍຫຼາຍພາກສ່ວນກ່ຽວຂ້ອງ (ອີງຕາມຄະນະວິຊາການຍ່ອຍຂະແໜງການປ່າໄມ້ທີ່ມີໃນປະຈຸບັນ)

  - ຈໍານວນແກ້ໄຂບັນຫາເບື້ອງຕົ້ນ: 0
  - ເປົ້າໝາຍ: 4 ການແກ້ໄຂ (06/2026)



**ຜົນງານທີ່ບັນລຸໄດ້:**

- ✓ ໄດ້ສ້າງກອບວຽກຮ່ວມມືກັບໂຄງການ FLEGT FC (KfW) ແລະ ຄູ່ຮ່ວມງານຈາກກະຊວງກະສິກໍາ ແລະ ປ່າໄມ້
- ✓ ໄດ້ຈັດກອງປະຊຸມຄະນະຮັບຜິດຊອບດ້ານວິຊາການ (TWG) ກ່ຽວກັບການພັດທະນາ ລະບົບ TLAS
  - ▪ ໄດ້ໃຫ້ການແນະນໍາທາງດ້ານວິຊາການ ກ່ຽວກັບ ແນວຄວາມຄິດຂອງ ລະບົບ TLAS ໃນເດືອນຕຸລາ, ທັນວາ (ແຂວງວຽງຈັນ) 2024
  - ▪ ໄດ້ໃຫ້ການແນະນໍາທາງດ້ານວິຊາການ ກ່ຽວກັບ TLD3 ໃນເດືອນສິງຫາ 2024, ຈັດກອງປະຊຸມTWG ກ່ຽວກັບ ທຸກໆTLDs ໃນເດືອນຕຸລາ 2024

# ນະໂຍບາຍດ້ານປ່າໄມ້ ຜົນງານທີ່ບັນລຸໄດ້

**ຜົນໄດ້ຮັບ 1:**ວຽກງານການບໍລິຫານຄຸ້ມຄອງປ່າໄມ້ ແບບມີສ່ວນຮ່ວມ, ບົນພື້ນຖານອີງໃສ່ບົດບາດຍິງ-ຊາຍ ແລະ ສິດທິມະນຸດ, ເປັນມິດກັບຊີວະນາໆພັນ ແລະ ການປາສະຈາກການທຳລາຍປ່າໄມ້ ໃນຂະແໜງການປ່າໄມ້ ໄດ້ຮັບການປັບປຸງ.

➢ **ຕົວຊີ້ບອກຜົນໄດ້ຮັບ 1.3**: ຈຳນວນເອກະສານນະໂຍບາຍທີ່ໄດ້ສະໜັບສະໜູນ ກ່ຽວກັບ ມາດຖານຄວາມຍືນຍົງ ແລະ ຄຸນນະພາບຂອງຜະລິດຕະພັນໄມ້ ໃນຕ່ອງໂສ້ມູນຄ່າທຸລະກິດໄມ້ ໄດ້ຮັບການທົດລອງ

- ຈຳນວນເອກະສານເບື້ອງຕົ້ນ: 1 (ການພັດທະນາ TLAS ທີ່ໄດ້ກຳນົດໃນກົດ ໝາຍ ວ່າດ້ວຍປ່າໄມ້)
- ເປົ້າໝາຍ: 4 ເອກະສານດ້ານນະໂຍບາຍ (12/2026)



**ຜົນງານທີ່ບັນລຸໄດ້:**

✓ TLAS (TLD3/4)

- ໄດ້ເຜີຍແຜ່ TLD 3 ຢູ່ຂັ້ນບ້ານ (ໄມ້ຈາກປ່າປູກ)/ TLD 4 (ໄມ້ທຳມະຊາດຈາກນຳໃຊ້ປ່າໄມ້ຊົມໃຊ້ຂອງບ້ານ ແລະ ໃນດິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ) ໃນແຂວງຄຳມ່ວນ ໃນເດືອນ ມີນາ 2024

✓ PMO11

- ການຝຶກອົບຮົມທວນຄືນການໃຊ້ ໂດຣນ /OLDM ໃຫ້ກັບ ກອງກວດກາປ່າໄມ້ ຢູ່ແຂວງອັດຕະປື ແລະ ຄຳມ່ວນໃນເດືອນພຶດສະພາ 2024

# ນະໂຍບາຍດ້ານປ່າໄມ້
# ສິ່ງທ້າທາຍ, ບົດຮຽນທີ່ຫອດຖອນໄດ້ ແລະ ແຜນວຽກໃນຕໍ່ໄປ

## ສິ່ງທ້າທາຍ :

- ການເຈລະຈາ VPA ໄດ້ມີຄວາມຊັກຊ້າ ແລະ ໄດ້ຖືກຢຸດຕິ ຍ້ອນມີລະບຽບການໃໝ່ຂອງ EU ກ່ຽວກັບ ຕ່ອງໂສ້ການສະໜອງສິນຄ້າ ທີ່ປາສະຈາກການທຳລາຍປ່າໄມ້ (EUDR)

## ບົດຮຽນທີ່ຫອດຖອນໄດ້:

- ການຕົກລົງ ກ່ຽວກັບ ໄມ້ທີ່ຖືກຕ້ອງຕາມກົດໝາຍ ທີ່ມີສ່ວນຮ່ວມຈາກຫລາຍພາກສ່ວນທີ່ກ່ຽວຂ້ອງ ແມ່ນແກ່ຍາວ ແຕ່ກໍ່ມີຜົນປະໂຫຍດໃຫ້ທຸກຝ່າຍ.
- TLAS ມີຂັ້ນຕອນທີ່ຈະແຈ້ງ ແລະ ມີຄວາມຮັບຜິດຊອບສຳລັບໄມ້ຖືກກົດໝາຍ ແລະ ຕ່ອງໂສ້ການສະໜອງ ແລະ ໃນດ້ານຫລັກການແມ່ນສາມາດໃຊ້ເປັນຕົວແບບໃຫ້ແກ່ຜະລິດຕະພັນອື່ນໆ.

## ແຜນວຽກໃນຕໍ່ໜ້າ:

- ສືບຕໍ່ໃຫ້ການແນະນຳ ກ່ຽວກັບ ການຮ່າງນິຕິກຳ ໃຫ້ສຳເລັດ (ແນວຄວາມຄິດຂອງ TLAS, ນິຕິກຳ TLAS, ຂໍ້ຕົກລົງ" ວ່າດ້ວຍການຄຸ້ມຄອງໄມ້ ທີ່ຖືກຍຶດ ແລະ ຖືກຮິບ, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ (NTFPs)", ຂໍ້ຕົກລົງເລກທີ 0451/ ກຊອຄ "ຂໍ້ຕົກລົງວ່າດ້ວຍ ການສຳລັບການນຳເຂົ້າໄມ້")
- ສະໜັບສະໜູນລັດຖະບານລາວໃນການກະກຽມການເຈລະຈາກັບ EU ກ່ຽວກັບການຮ່ວມມືໃນອະນາຄົດ
- ພັດທະນາແນວຄວາມຄິດ ກ່ຽວກັບ ການຈັດປະຊຸມປຶກສາຫາລື ກັບຫລາຍພາກສ່ວນທີ່ກ່ຽວຂ້ອງ ໃນຂະແໜງການປ່າໄມ້ຂອງສປປ ລາວເພື່ອກຳນົດວິທີແກ້ໄຂບັນຫາຕ່າງໆ
- ສະໜັບສະໜູນການທົດລອງບາງເອກະສານ ທາງດ້ານນະໂຍບາຍປ່າໄມ້
- ຈັດຝຶກອົບຮົມ ກ່ຽວກັບ EUDR ເປັນຕົ້ນແມ່ນການຝຶກ (ToT)

# ນະໂຍບາຍດ້ານປ່າໄມ້

**ຜົນໄດ້ຮັບ 1:**ວຽກງານການບໍລິຫານຄຸ້ມຄອງປ່າໄມ້ ແບບມີສ່ວນຮ່ວມ, ບົນພື້ນຖານອີງໃສ່ບົດບາດຍິງ-ຊາຍ ແລະ ສິດທິມະນຸດ, ເປັນມິດກັບຊີວະນາໆພັນ ແລະ ການປ່າສະຈາກການທຳລາຍປ່າໄມ້ ໃນຂະແໜງການປ່າໄມ້ ໄດ້ຮັບການປັບປຸງ.

| ຕົວຊີ້ວັດຜົນໄດ້ຮັບຂອງ EU | ຂໍ້ມູນເບື້ອງຕົ້ນ | ເປົ້າໝາຍ | ການປ່ຽນແປງ |
|---|---|---|---|
| 1.1) ໄດ້ນຳໃຊ້ຮູບແບບຂອງການປຶກສາຫາລື ດ້ານນະໂຍບາຍກັບຫຼາຍຂະ ແໜງການ (EU) ເພື່ອຊຸກຍູ້ການບໍລິຫານຄຸ້ມຄອງປ່າໄມ້. | 0 | 1 ຮູບແບບ | ໄດ້ມີການອະທິບາຍຜ່ານການປຶກສາຫາລືລະຫວ່າງຂະແໜງການ ແລະ ການປຶກສາຫາລື ລະຫວ່າງ EU ແລະ ສປປ ລາວກ່ຽວກັບການເປັນຄູ່ຮ່ວມງານໃນວຽກງານປ່າໄມ້<br><br>ສະເໜີ: 2 ຮູບແບບ(1 ສະຫະພາບເອີຣົບ-ສປປລາວ, 1 ເວທີການປຶກສາຫາລືລະດັບຊາດ) |
| 1.2) ຈຳນວນວິທີການແກ້ໄຂບັນຫາທີ່ເປັນອຸປະສັກຕໍ່ການພັດທະນາ ບາງຕ່ອງໂສ້ມູນຄ່າທຸລະກິດໄມ້ ແລະ ເຄື່ອງປ່າຂອງດົງ ໄດ້ຮັບການພັດທະນາໂດຍຫຼາຍພາກສ່ວນກ່ຽວຂ້ອງ (ອີງຕາມຄະນະວິຊາການຍ່ອຍຂະແໜງການປ່າໄມ້ທີ່ມີໃນປະຈຸບັນ) | 0 | 4 ວິທີແກ້ບັນຫາ (06/2026) | |
| 1.3)ຈຳນວນເອກະສານນະໂຍບາຍທີ່ໄດ້ສະໜັບສະໜູນ ກ່ຽວກັບ ມາດຖານຄວາມຍືນຍົງ ແລະ ຄຸນນະພາບຂອງຜະລິດຕະພັນໄມ້ ໃນຕ່ອງໂສ້ມູນຄ່າທຸລະກິດໄມ້ ໄດ້ຮັບການທົດລອງ | 1 ເອກະສານນະໂຍບາຍ (ການພັດທະນາ TLAS ໄດ້ຖືກເອົາເຂົ້າໃນກົດໝາຍວ່າດ້ວຍປ່າໄມ້). | 4 ເອກະສານ ນະໂຍບາຍ (12/2026) | |

#TEAMEUROPE

# ວາລະປະຊຸມ

1. ສະພາບລວມຂອງ ProFEB
2. ນະໂຍບາຍປ່າໄມ້
3. ການອະນຸລັກຊີວະນາໆພັນ
4. ການສຶກສາ ແລະ ຕ່ອງໂສ້ມູນຄ່າ
5. ການຟື້ນຟູພູມີທັດປ່າໄມ້







# ການອະນຸລັກຊີວະນາໆພັນ ຜົນງານທີ່ບັນລຸໄດ້

**ຜົນໄດ້ຮັບ 2: ຄວາມສາມາດຂອງຄູ່ຮ່ວມງານ ແລະ ການຮ່ວມມືຮ່ວມຊາຍແດນໃນວຽກງານອະນຸລັກສັດປ່າ ແລະ ການຄຸ້ມຄອງພູມສັນຖານຫີນໜາມໜໍ່ ແລະ ຟອງຍ່າ-ແກບັງ ໄດ້ຮັບການປັບປຸງ.**

<u>**ຕົວຊີ້ວັດຜົນໄດ້ຮັບ EU 2.1**</u> ການ ປະສານງານ ລະຫວ່າງ ສປປ ລາວ ແລະ ຫວຽດນາມ ກ່ຽວກັບ ແຜນດຳເນີນງານ ໃນການຄຸ້ມຄອງ ແບບມີຄວາມຮັບຜິດຊອບ ທາງບົດບາດຍິງຊາຍ ໃນການອະນຸລັກ ພູມມີທັດ ທຳມະຊາດ ຂ້າມຊາຍແດນ ຫີນໜາມໜໍ່ ແລະ ຟອງຍ່າ-ແກບັງ ທີ່ສອດຄ່ອງຕາມ ມາດຕະຖານ ບັນຊີ ສີຂຽວ (Green List standard).

- <u>ຂໍ້ມູນເບື້ອງຕົ້ນ:</u> ຍັງບໍ່ມີແຜນດຳເນີນງານ (ໄດ້ຕົກລົງກອບວຽກການຄຸ້ມຄອງຮ່ວມຊາຍແດນລະຫວ່າງ ລາວ ແລະ ຫວຽດນາມຊຶ່ງເປັນພື້ນຖານໃຫ້ແກ່ການສ້າງແຜນດຳເນີນງານ).
- <u>ເປົ້າໝາຍ:</u> 1 ແຜນດຳເນີນງານ (12/2024)

**ຜົນງານທີ່ບັນລຸໄດ້:**

- ໄດ້ຮັບການເຫັນດີ, ຮັບຮູ້ ແລະ ຍິນຍອມດ້ວຍຄວາມສະໝັກໃຈ (FPIC) ຈາກທຸກພາກສ່ວນຂອງລາວກ່ຽວກັບສະເໜີຊື່ເຂົ້າເປັນມໍລະດົກໂລກ ລວມທັງແຜນດຳເນີນງານ FPIC ເພື່ອແກ້ໄຂບັນຫາຂອງປະຊາຊົນບັນດາຊົນເຜົ່າ (2021-2023)
- ຄຳຮ້ອງເຂົ້າເປັນມໍລະດົກໂລກໄດ້ຖືກສົ່ງແລ້ວ (ເດືອນກຸມພາ 2024)
- ຄະນະປະເມີນສຳລັບການສະເໜີເຂົ້າເປັນມໍລະດົກໂລກໄດ້ມາເຮັດວຽກ (ກັນຍາ 2024)
- ພາກສ່ວນກ່ຽວຂ້ອງຈາກ ລາວ ແລະ ຫວຽດນາມໄດ້ໄປທັດສະນະສຶກສາທະວີບຢູໂຣບເພື່ອເພີ່ມຄວາມເຂົ້າໃຈກ່ຽວກັບການຄຸ້ມຄອງມໍລະດົກໂລກຮ່ວມຊາຍແດນ (ກັນຍາ 2024)





ການ ຮ່ວມມື ເຢຍລະມັນ DEUTSCHE ZUSAMMENARBEIT
ຮ່ວມໄດ້ທຶນໂດຍ ສະຫະພາບ ເອີຣົບ
ຈັດຕັ້ງປະຕິບັດໂດຍ giz

# ການອະນຸລັກຊີວະນາໆພັນ ຜົນງານທີ່ບັນລຸໄດ້

**<u>ຕົວຊີ້ວັດຜົນໄດ້ຮັບ EU 2.2</u>** ພາກສ່ວນທີ່ກ່ຽວຂ້ອງ ໄດ້ຕົກລົງ ແຜນດໍາເນີນງານ ເພື່ອສະກັດກັ້ນ ການຄ້າສັດປ່າ ທີ່ຜິດກົດໝາຍ, ໂດຍຜ່ານເວທີ ການປຶກສາຫາລື ເຊິ່ງລວມມີ ມາດຕະການ ທີ່ມີສ່ວນຮ່ວມ ແລະ ຮັບຜິດຊອບ ທາງບົດບາດຍິງຊາຍ.

<u>ຂໍ້ມູນເບື້ອງຕົ້ນ</u>: (0) ບໍ່ທັນມີແຜນດໍາເນີນງານ ການປະສານງານລະຫວ່າງບັນດາອົງການຈັດຕັ້ງ ( ສ້າງຕັ້ງຈຸດປະສານງານ ແລະ ຂະບວນການປະສານແບບມີສ່ວນຮ່ວມ)

<u>ເປົ້າໝາຍ</u>:  1 ແຜນດໍາເນີນງານລະຫວ່າງອົງການຈັດຕັ້ງໄດ້ຖືກເຫັນດີ ແລະ ຮັບຮອງ (06/2025)

**ຜົນງານທີ່ບັນລຸໄດ້ :**

- ໄດ້ຈັດກອງປະຊຸມ 3  ຄັ້ງ ໃນຈໍານວນ 5 ຄັ້ງ ເພື່ອສ້າງແຜນດໍາເນີນງານເພື່ອຕ້ານບັນຫາການຄ້າຂາຍສັດປ່າ ຜິດກົດໝາຍ
- ສະພາບປະຈຸບັນ: ໄດ້ກໍານົດວິໃສທັດຮ່ວມກັນ ແລະ ໄດ້ກໍານົດ *ຂົງເຂດວຽກບູລິມະສິດ* ເພື່ອຕ້ານການຄ້າຂາຍສັດປ່າຜິດກົດໝາຍຢູ່ໃນ ລາວ
- *ຂົງເຂດວຽກບູລິມະສິດ:* ການປະຕິບັດກົດໝາຍ, ນິຕິກໍາ, ການໂຄສະນາປຸກຈິດສໍານຶກ, ການອະນຸລັກ ຫລື ຄຸ້ມຄອງສັດປ່າ, ທາງເລືອກອື່ນສໍາລັບການດໍາລົງຊີວິດ





# ການອະນຸລັກຊີວະນາໆພັນ
# ສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້ ແລະ ແຜນວຽກໃນຕໍ່ໄປ






## ສິ່ງທ້າຍທາຍ:

- ການເຫັນດີຍິນຍອມຈາກຝ່າຍຫວຽດນາມ ສຳລັບການສະເໜີເຂົ້າເປັນມໍລະດົກໂລກຮ່ວມຊາຍແດນ
- ການປົກປັກຮັກສາເຂບເຂດພື້ນທີ່ມໍລະດົກໂລກ ຂັດກັບບາງກິດຈະກຳ ກໍ່ສ້າງພື້ນຖານໂຄງລ່າງ ທີ່ອາດສິ່ງຜົນບໍ່ດີຕໍ່ການເປັນມໍລະດົກໂລກ; ມີຄວາມຈຳເປັນຕ້ອງມີການປະຕິບັດຄຳໝັ້ນຢ່າງເຄັ່ງຄັດ
- ການໃຫ້ທຶນຊ່ວຍເຫລືອແບບຍືນຍົງສຳລັບການຄຸ້ມຄອງສະຖານທີ່ມໍລະດົກໂລກ
- ການມີຄຳໝັ້ນໝາຍລະດັບສູງສຳລັບຮູບແບບການຄຸ້ມຄອງແບບມີສ່ວນຮ່ວມ ແລະ ການຮ່ວມມື ແລະ ການເຂົ້າຮ່ວມຂອງທຸກຝ່າຍທີ່ກ່ຽວຂ້ອງ (ຝ່າຍລັດຖະບານ, ຄູ່ຮ່ວມພັດທະນາ, ພາກເອກະຊົນ,  NGOs) ສຳລັບແຜນດຳເນີນງານການຕ້ານການຄ້າຂາຍສັດປ່າຜິດກົດໝາຍ

## ບົດຮຽນຖອດຖອນໄດ້:

- ສິ່ງສຳຄັນແມ່ນຕ້ອງສ້າງຄວາມເຊື່ອໝັ້ນ ແລະ ຮັກສາສາຍພົວພັນການເຮັດວຽກທີ່ດີລະຫວ່າງລາວ ແລະ ຫວຽດນາມ
- ສິ່ງສຳຄັນແມ່ນຕ້ອງມີການສື່ສານທີ່ດີ ແລະ ມີການແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນລະຫວ່າງບັນດາເຈົ້າໜ້າທີ່ຂອງລາວໃນທຸກລະດັບເພື່ອຮັບປະກັນໃຫ້ມີການສະໜັບສະໜູນໃນໄລຍະຍາວ ສຳລັບການເຂົ້າເປັນມໍລະດົກໂລກ.

# ການອະນຸລັກຊີວະນາໆພັນ
# ສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້ ແລະ ແຜນວຽກໃນຕໍ່ໄປ

## ແຜນວຽກໃນຕໍ່ໄປ:

- ສະໜັບສະໜູນລັດຖະບານ ໃນວຽກງານເຂົ້າເປັນມໍລະດົກໂລກໃຫ້ສຳເລັດ
- ສ້າງແຜນດຳເນີນງານການຄຸ້ມຄອງຮ່ວມຊາຍແດນ
  - ດຳເນີນການຕິດຕາມ ແລະ ລາຍງານຮ່ວມກັນ ກ່ຽວກັບຄວາມຄືບໜ້າຂອງການອະນຸລັກ, ໂດຍນຳໃຊ້ ArcGIS Pro
  - ສ້າງແຜນງານພັດທະນາຄວາມສາມາດກ່ຽວກັບການຄຸ້ມຄອງຮ່ວມຊາຍແດນ
  - ການຕີຄວາມໝາຍຂອງຄຸນຄ່າ ແລະ ການສົ່ງເສີມສະຖານທີ່ມໍລະດົກໂລກຮ່ວມຊາຍແດນ
  - ການສຶກສາຄົ້ນຄວ້າຮ່ວມຊາຍແດນ
- ການເຜີຍແຜ່ແຜນແມ່ບົດການທ່ອງທ່ຽວ
  - ສະໜັບສະໜູນການພັດທະນາການທ່ອງທ່ຽວແບບຍືນຍົງ, ລວມທັງການສ້າງຄວາມສາມາດໃຫ້ແກ່ພາກສ່ວນກ່ຽວຂ້ອງ
- ການສ້າງແຜນດຳເນີນງານກ່ຽວກັບການຕ້ານການຄ້າຂາຍສັດປ່າທີ່ຜິດກົດໝາຍ
- ຍຸດທະສາດການໃຫ້ທຶນສະໜັບສະໜູນແບບຍືນຍົງສຳລັບຫີນໜາມໜໍ່
- ການປະເມີນຜົນກະທົບແບບຍຸດທະສາດ ແລະ ການສ້າງຍຸດທະສາດການຄຸ້ມຄອງພູມີທັດສຳລັບເຂດພູມີທັດປ່າສະຫງວນພາກຕາເວັນອອກຂອງແຂວງຄຳມ່ວນ, ລວມທັງ ຫີນໜາມໜໍ່



# ການອະນຸລັກຊີວະນາໆພັນ

**ຜົນໄດ້ຮັບ EU 2**

**ຄວາມສາມາດຂອງຄູ່ຮ່ວມງານ ແລະ ການຮ່ວມມືຮ່ວມຊາຍແດນໃນວຽກງານອະນຸລັກສັດປ່າ ແລະ ການຄຸ້ມຄອງພູມສັນຖານຫີນໝາມໝັ່ນ ແລະ ຟອງຍ່າ-ແກບັງ ໄດ້ຮັບການປັບປຸງ.**

| ຕົວຊີ້ວັດຜົນໄດ້ຮັບ EU | ຂໍ້ມູນເບື້ອງຕົ້ນ | ເປົ້າໝາຍ | ການປ່ຽນແປງ |
|---|---|---|---|
| 2.1) ການ ປະສານງານ ລະຫ່ວາງ ສປປ ລາວ ແລະ ຫຽວດນາມ ກ່ຽວກັບ ແຜນດຳເນີນງານ ໃນການຄຸ້ມຄອງ ແບບມີຄວາມຮັບຜິດຊອບ ທາງບົດບາດຍິງຊາຍ ໃນການອະນຸລັກ ພູມມີທັດ ທຳມະຊາດ ຂ້າມຊາຍແດນ ຫີນໝາມໝັ່ນ ແລະ ຟອງຍາເກບັງ ທີ່ສອດຄ່ອງຕາມ ມາດຕະຖານ ບັນຊີ ສີຂຽວ. | ບໍ່ມີ | 1 ແຜນດຳເນີນງານ (12/2024) | <u>ສະເໜີປັບປຸງເນື້ອໃນຄືນໃໝ່:</u><br>ແຜນດຳເນີນງານສຳລັບການຄຸ້ມຄອງຮ່ວມຊາຍແດນໃນເຂດພູມີທັດອະນຸລັກທຳມະຊາດທີ່ມີການເຊື່ອມສານບົດບາດຍິງ-ຊາຍສຳລັບ ຫີນໝາມໝັ່ນ ແລະ ຟອງຫຍາເກບັງໂດຍສອດຄ່ອງກັບມາດຕາຖານບັນຊີສີຂຽວທີ່ໄດ້ມີການປະສານງານລະຫວ່າງ ລາວ ແລະ ຫວຽດນາມ ແລະ 8 ມາດຕາການທີ່ເປັນບຸລິມະສິດໄດ້ຮັບການຈັດຕັ້ງປະຕິບັດ.<br><br>ເປົ້າໝາຍ: 1 ແຜນດຳເນີນງານໄດ້ຮັບການປະສານງານ (12/2025) ແລະ 8 ມາດຕາການບຸລິມະສິດໄດ້ຖືກຈັດຕັ້ງປະຕິບັດ (06/2027) |
| 2.2) ມີແຜນດຳເນີນງານໜຶ່ງ ເພື່ອຄວບຄຸມການຄ້າຂາຍສັດປ່າຜິດກົດໝາຍ ເຊິ່ງລວມທັງມາດຕະການແບບມີສ່ວນຮ່ວມ ແລະ ມີການເຊື່ອມສານບົດບາດຍິງ-ຊາຍ ໂດຍໄດ້ຮັບຄວາມເຫັນດີໃນເວທີທີ່ມີຫລາຍພາກສ່ວນເຂົ້າຮ່ວມ. | ບໍ່ມີ | 1 ແຜນດຳເນີນງານທີ່ເຫັນດີລະຫວ່າງສະຖາບັນ (06/2025) | <u>ສະເໜີປັບປຸງເນື້ອໃນຄືນໃໝ່:</u><br>ມີແຜນດຳເນີນງານໜຶ່ງ ເພື່ອຄວບຄຸມການຄ້າຂາຍສັດປ່າຜິດກົດໝາຍເຊິ່ງລວມທັງມາດຕະການແບບມີສ່ວນຮ່ວມ ແລະ ມີການເຊື່ອມສານບົດບາດຍິງ-ຊາຍ ໂດຍໄດ້ເຫັນດີໃນເວທີທີ່ມີຫລາຍພາກສ່ວນເຂົ້າຮ່ວມ ແລະ ມາດຕາການທີ່ເປັນບຸລິມະສິດຕ່າງໆໄດ້ຮັບການຈັດຕັ້ງປະຕິບັດ.<br><br>ເປົ້າໝາຍ: 1 ແຜນດຳເນີນງານໄດ້ຮັບການເຫັນດີ (06/2025) ແລະ 2 ມາດຕາການທີ່ເປັນບູລິມະສິດໄດ້ຮັບການຈັດຕັ້ງປະຕິບັດ (06/2027) |

#TEAMEUROPE

# ວາລະປະຊຸມ

1. **ສະພາບລວມຂອງ ProFEB**
2. ນະໂຍບາຍປ່າໄມ້
3. ການອະນຸລັກຊີວະນາໆພັນ
4. **ການສຶກສາ ແລະ ຕ່ອງໂສ້ມູນຄ່າເພີ່ມ**
5. ການຟື້ນຟູພູມີທັດປ່າໄມ້ຄືນໃໝ່







# ການສຶກສາ
# ຜົນງານທີ່ບັນລຸໄດ້

## ຜົນງານທີ່ບັນລຸໄດ້ 1/2

- ໄດ້ມີຜົນສຳເລັດໃນການຢ້ຽມຢາມແລກປ່ຽນຂໍ້ມູນກັບ**ຄະນະວິທະຍາສາດປ່າໄມ້ (FFS) ຂອງມະຫາວິທະຍາໄລແຫ່ງຊາດລາວ (ມຊ)**
  - ການຊອກຮູ້ການບໍລິການທີ່ມີຢູ່ໃນປະຈຸບັນ ທີ່ຫ້ອງທົດລອງກ່ຽວກັບໄມ້ ຂອງ FFS ສາມາດເຮັດໄດ້ (ການບໍລິການສຳລັບ ການ ທົດສອບ ຄຸນລັກສະນະ ຂອງໄມ້ ແລະ ຜະລິດຕະພັນໄມ້ ລວມທັງຫລັກສູດໄລຍະສັ້ນສຳລັບພາກເອກະຊົນ ແລະ ພາກສ່ວນທົ່ວໄປ) ແລະ ການບໍລິການຕ່າງໆ ທີ່ມີຈຸດປະສົງຈະພັດທະນາຂຶ້ນ ຫລື ຈະນຳສະເໜີໃນອະນາຄົດ
  - ການຊອກຮູ້ປະເພດອຸປະກອນ ແລະ ເຄື່ອງກົນຈັກທີ່ຕ້ອງການ ສຳລັບການໃຫ້ການບໍລິການເຫລົ່ານີ້ລວມທັງອຸປະກອນການສິດສອນ ທີ່ຕ້ອງການ ສຳລັບການສິດສອນແບບປະຖະກະຖາສຳລັບຫລັກສູດປະລິນຍາຕີ ແລະ ປະລິນຍາໂທ
  - ເກັບກຳຈຳນວນນັກສຶກສາທີ່ເຂົ້າຮຽນໃນຫລັກສູດປະລິນຍາຕີ ແລະ ປະລິນຍາໂທ (2024: ນັກສຶກສາ 233 ຄົນ [ໃນນັ້ນມີຍິງ 96 ຄົນ]; ໃນປີ 2023: 300 ຄົນ [ໃນນັ້ນມີຍິງ 150 ຄົນ]; ໃນປີ 2022: 428 ຄົນ [ ໃນນັ້ນຍິງ 222 ຄົນ]; ໃນປີ 2021: 665 ຄົນ [ໃນນັ້ນຍິງ 341 ຄົນ]) ແລະ ເກັບກຳເອົາເຫດຜົນຕ່າງໆ ທີ່ມີການຫລຸດລົງ ຂອງອັດຕາການເຂົ້າຮຽນ ແລະ ການເພີ່ມຂຶ້ນຂອງອັດຕາການປະລະການຮຽນ ຂອງນັກສຶກສາ
  - ສົມທຽບບັນດາຫຼັກສູດ ທີ່ໄດ້ນຳໃຊ້ສອນຫລັກສູດປະລິນຍາຕີ ຢູ່ໃນ 5 ພາກວິຊາຂອງ ຄະນະວິທະຍາສາດປ່າໄມ້.

- ໄດ້ມີການຢ້ຽມຢາມແລກປ່ຽນຢ່າງມີຜົນສຳເລັດດີກັບ **Agri-Science Queensland** ເຊິ່ງມີຜູ້ເຂົ້າຮ່ວມຈາກກົມປູກຝັງ ແລະ ການປະມົງ ຂອງລັດຖະບານລັດ **Queensland** , ອົດສະເຕຣເລຍ, ເພື່ອກະກຽມໂຄງການໃນອະນາຄົດ, ເພື່ອສະໜັບສະໜູນ FFS ແລະ ຫ້ອງທົດລອງໄມ້ ສຳລັບການສຶກສາຄົ້ນຄວ້າ, ໂດຍໄດ້ຮັບທຶນສະໜັບສະໜູນຈາກສູນອົດສະເຕຣເລຍ ສຳລັບການສຶກສາຄົ້ນຄວ້າການກະສິກຳສາກົນ (ACIAR)

# ການສຶກສາ
# ຜົນງານທີ່ບັນລຸໄດ້

## ຜົນງານທີ່ບັນລຸໄດ້ 2/2

- ໄດ້ມີການຢ້ຽມຢາມແລກປ່ຽນທີ່ໄດ້ຮັບຜົນດີກັບມູນນິທິສາກົນແຫ່ງໜຶ່ງ ກ່ຽວຂ້ອງກັບການນຳສະເໜີ ແລະ ຈັດຕັ້ງປະຕິບັດ**ແຜນງານການໃຫ້ທຶນການສຶກສາ**ທີ່ສຸມໃສ່ນັກສຶກສາທີ່ເຂົ້າຮຽນໃນຄະນະວິທະຍາສາດປ່າໄມ້ (FFS) ຂອງມະຫາວິທະຍາໄລແຫ່ງຊາດ (ມຊ)
  - ເພື່ອແກ້ໄຂບັນຫາການຫລຸດລົງ ຂອງອັດຕາການເຂົ້າຮຽນຂອງນັກສຶກສາ ລວມທັງການເພີ່ມຂຶ້ນ ຂອງອັດຕາການປະລະການຮຽນຂອງນັກສຶກສາ ດັ່ງນັ້ນຈຶ່ງມີຈຸດປະສົງໃນການສະໜອງທຶນການສຶກສາໃຫ້ແກ່ນັກສຶກສາລາວທີ່ຖືກຄັດເລືອກຈຳນວນໜຶ່ງທີ່ໄດ້ຕາມເງື່ອນໄຂທີ່ວາງໄວ້ (ຕົວຢ່າງ ຄວາມຈຳເປັນທາງດ້ານການເງິນ, ການສອບເສັງຜ່ານເຂົ້າຮຽນຂັ້ນສູງຂຶ້ນໄປ, ສັນຊາດ, ອາຍຸ)
- ການຢ້ຽມຢາມແລກປ່ຽນຄັ້ງທຳອິດ ກັບວິທະຍາໄລການກະເສດ ແລະ ປ່າໄມ້ພາກເໜືອ (NAFC) ກ່ຽວກັບການຮ່ວມມືໃນອະນາຄົດ ໃນບັນດາແຂວງພາກເໜືອ (ຫລວງພະບາງ, ຫົວພັນ, ອຸດົມໄຊ, ໄຊຍະບູລີ, ແຂວງວຽງຈັນ) ໂດຍມີຈຸດປະສົງ:
  - ສະໜັບສະໜູນການພັດທະນາ ແລະ ປັບປຸງອຸປະກອນເຄື່ອງມືສິດສອນ ແລະ ຫລັກສູດທີ່ມີຢູ່
  - ສ້າງຄວາມເປັນເອກະພາບທາງດ້ານເນື້ອໃນຫລັກສູດລະຫວ່າງ NAFC ແລະ FFS
  - ສະໜອງເອກະສານ ແລະ ອຸປະກອນສຳລັບການສິດສອນ ສຳລັບການເຮັດປະຖະກະຖາ

# ການສຶກສາ
# ສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້ ແລະ ແຜນວຽກໃນຕໍ່ໄປ

## ສິ່ງທ້າທາຍ

- **ການວ່າຈ້າງ** "ທີ່ປຶກສາດ້ານຍຸດທະສາດສໍາລັບການພັດທະນາຫຼັກສູດ ແລະ ການຮ່ວມມືກັບມະຫາວິທະຍາໄລແຫ່ງຊາດ" ໃຫ້ເປັນຊ່ຽວຊານຫຼາຍດ້ານ

## ບົດຮຽນທີ່ຖອດຖອນໄດ້

- ໂດຍສະເພາະແມ່ນຂົງເຂດການຮ່ວມມື ທີ່ນໍາສະເໜີໃໝ່ ສິ່ງສໍາຄັນແມ່ນຕ້ອງໃຫ້ທຸກຄົນຮູ້ຈັກເຊິ່ງກັນ ແລະ ກັນ ສາກ່ອນເພື່ອສ້າງຄວາມເຊື່ອໝັ້ນລະຫວ່າງບັນດາຄູ່ຮວມມືໂຄງການ
- ສິ່ງສໍາຄັນແມ່ນຕ້ອງມີການສື່ສານພົວພັນກັນ ຢ່າງເປີດເຜີຍ ແລະ ມີການແລກປ່ຽນຄໍາຄິດຄໍາເຫັນກັນຢ່າງເປັນປົກກະຕິກັບບັນດາຄູ່ຮ່ວມມື ເພື່ອຮັບປະກັນການນໍາໃຊ້ທ່າແຮງທີ່ມີຢູ່ສໍາລັບການສະໜັບສະໜູນຢ່າງມີປະສິດທິຜົນໃນໄລຍະຍາວ










# ການສຶກສາ
# ສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້ ແລະ ແຜນວຽກໃນຕໍ່ໄປ




## ແຜນວຽກໃນຕໍ່ໄປ:

- ສືບຕໍ່ສ້າງສາຍພົວພັນໃນການເຮັດວຽກທີ່ດີລະຫວ່າງ ບັນດາຄູ່ຮ່ວມມືໂຄງການ
- ສ້າງແຜນດຳເນີນງານໃຫ້ສຳເລັດ
- ກຳນົດການຮ່ວມມືກັບຄະນະວິທະຍາສາດປ່າໄມ້ (FFS) ຂອງມະຫາວິທະຍາໄລແຫ່ງຊາດ
- ສ້າງແຜນການຮ່ວມມືກັບວິທະຍາໄລການກະເສດ ແລະ ປ່າໄມ້ພາກເໜືອ (NAFC)
- ສ້າງແຜນການຮ່ວມມືກັບມູນນິທິສາກົນ ສຳລັບແຜນງານການໃຫ້ທຶນການສຶກສາ
- ວ່າຈ້າງ "ທີ່ປຶກສາດ້ານຍຸດທະສາດ ເພື່ອພັດທະນາຫລັກສູດ ແລະ ຮ່ວມມືກັບມະຫາວິທະຍາໄລແຫ່ງຊາດ" ຊ່ຽວຊານທີ່ຮູ້ວຽກຫລາຍດ້ານ

# ການສຶກສາ

## ຜົນໄດ້ຮັບ 3) ຄວາມຮູ້ ແລະ ຄວາມສາມາດດ້ານວິຊາການຂອງຜູ້ຊາຍ ແລະ ແມ່ຍິງໃນຂະແໜງການປ່າໄມ້ໄດ້ເຂັ້ມແຂງຂຶ້ນ.

| | | | |
|---|---|---|---|
| **3.1) ສະໜອງທຶນໃຫ້ນັກສຶກສາທີ່ເຂົ້າຮຽນໃນຫຼັກສູດທີ່ກ່ຽວຂ້ອງ** (ຕົວຢ່າງ: FLR, ການປູກຕົ້ນໄມ້ແບບຍືນຍົງ, ກະສິກຳ-ປ່າໄມ້, NTFP, ການປຸງແຕ່ງໄມ້,ການຄຸ້ມຄອງການອະນຸລັກ) ໃນ ມຊ ແລະ ໃນບັນດາສູນຝຶກອົບຮົມວິຊາຊີບ (ລະດັບ 4 ແລະ ສູງກວ່ານັ້ນ) | 0 (ຈຳນວນນັກສຶກສາທັງໝົດປະມານ 273 ຄົນໃນປີ 2023, 397 ໃນປີ 2022 ແລະ 600 ໃນປີ 2021; ຍັງຕ້ອງສ້າງຫຼັກສູດໃໝ່ ແລະ ເຮັດໃຫ້ເນື້ອໃນຫຼັກສູດເຂົ້າກັບຄວາມຕ້ອງການໃນປະຈຸບັນຂອງຂະແໜງການນີ້. | ນັກສຶກສາ 100 ຄົນ (12/2026) | - **ສະເໜີປັບປຸງເນື້ອໃນຄືນໃໝ່:**<br><br>**ນັກສຶກສາ 100 ຄົນໄດ້ເຂົ້າຮຽນໃນຄະນະວິທະຍາສາດປ່າໄມ້ (FFS) ທີ່ຂຶ້ນກັບ ມຊ (NUoL), ໂດຍ 50% ແມ່ນແມ່ຍິງ, ໄດ້ຮັບທຶນການສຶກສາເພື່ອຮຽນຈົບຫຼັກສູດປະລິນຍາຕີ ແລະ ປະລິນຍາໂທ.**<br><br>- ສະເໜີຂໍ້ມູນເບື້ອງຕົ້ນໃໝ່: ຍັງບໍ່ທັນມີນັກສຶກສາ (0 ຄົນ) ທີ່ໄດ້ຮັບທຶນການສຶກສາ<br>- ສະເໜີເປົ້າໝາຍໃໝ່: ນັກສຶກສາ 100 ຄົນໄດ້ຮັບທຶນການສຶກສາ<br>- ສະເໜີກອບເວລາໃໝ່**: 03/2027** |
| 3.1) ສະໜອງທຶນໃຫ້ນັກສຶກສາທີ່ເຂົ້າຮຽນໃນຫຼັກສູດທີ່ກ່ຽວຂ້ອງ (ຕົວຢ່າງ: FLR, ການປູກຕົ້ນໄມ້ແບບຍືນຍົງ, ກະສິກຳ-ປ່າໄມ້, NTFP, ການປຸງແຕ່ງໄມ້,ການຄຸ້ມຄອງການອະນຸລັກ) ໃນ ມຊ ແລະ ໃນບັນດາສູນຝຶກອົບຮົມວິຊາຊີບ (ລະດັບ 4 ແລະ ສູງກວ່ານັ້ນ) | 0 (ຈຳນວນນັກສຶກສາທັງໝົດປະມານ 273 ຄົນໃນປີ 2023, 397 ໃນປີ 2022 ແລະ 600 ໃນປີ 2021; ຍັງຕ້ອງສ້າງຫຼັກສູດໃໝ່ ແລະ ເຮັດໃຫ້ເນື້ອໃນຫຼັກສູດເຂົ້າກັບຄວາມຕ້ອງການໃນປະຈຸບັນຂອງຂະແໜງການນີ້. | ນັກສຶກສາ 100 ຄົນ (12/2026) | - ສະເໜີປັບປຸງເນື້ອໃນຄືນໃໝ່:<br><br>ນັກສຶກສາ 100 ຄົນໄດ້ເຂົ້າຮຽນໃນຄະນະວິທະຍາສາດປ່າໄມ້ (FFS) ທີ່ຂຶ້ນກັບ ມຊ (NUoL), ໂດຍ 50% ແມ່ນແມ່ຍິງ, ໄດ້ຮັບທຶນການສຶກສາເພື່ອຮຽນຈົບຫຼັກສູດປະລິນຍາຕີ ແລະ ປະລິນຍາໂທ.<br><br>- ສະເໜີຂໍ້ມູນເບື້ອງຕົ້ນໃໝ່: ຍັງບໍ່ທັນມີນັກສຶກສາ (0 ຄົນ) ທີ່ໄດ້ຮັບທຶນການສຶກສາ<br>- ສະເໜີເປົ້າໝາຍໃໝ່: ນັກສຶກສາ 100 ຄົນໄດ້ຮັບທຶນການສຶກສາ<br>- ສະເໜີກອບເວລາໃໝ່: 03/2027 |

# ການສຶກສາ

## ຜົນໄດ້ຮັບ 3) ຄວາມຮູ້ ແລະ ຄວາມສາມາດດ້ານວິຊາການຂອງຜູ້ຊາຍ ແລະ ແມ່ຍິງໃນຂະແໜງການປ່າໄມ້ໄດ້ເຂັ້ມແຂງຂຶ້ນ.

| ຕົວຊີ້ຜົນໄດ້ຮັບ EU | ຂໍ້ມູນເບື້ອງຕົ້ນ | ເປົ້າໝາຍ | ສະເໜີການປ່ຽນແປງ |
|---|---|---|---|
| 3.2) ຍົກລະດັບຫ້ອງທົດລອງໄມ້ຂອງ ມຊ ເພື່ອໃຫ້ການບໍລິການແກ່ພາກເອກະຊົນ ແລະ ຜູ້ຊົມໃຊ້ທົ່ວໄປ. | ຈະກຳນົດເມື່ອເລີ່ມໂຄງການ | 5 ການບໍລິການໃໝ່ (12/2026) | - ສະເໜີປັບປຸງເນື້ອໃນຄືນໃໝ່:<br><br>ຫ້ອງທົດລອງໄມ້ຂອງຄະນະວິທະຍາສາດປ່າໄມ້ (FFS) ທີ່ຂຶ້ນກັບ ມຊ ໄດ້ເພີ່ມ 5 ການບໍລິການໃໝ່ສຳລັບການທົດລອງຄຸນລັກສະນະໄມ້ ແລະ ຜະລິດຕະພັນໄມ້ ແລະ ໄດ້ເພີ່ມ 5 ຫຼັກສູດໄລຍະສັ້ນສຳລັບພາກເອກະຊົນ ແລະ ພາກສ່ວນທົ່ວໄປ.<br><br>- ສະເໜີເກັບກຳຂໍ້ມູນເບື້ອງຕົ້ນໃໝ່: ໃຫ້ການບໍລິການ 20 ຢ່າງ (12 ການບໍລິການແມ່ນສຳລັບທົດລອງຄຸນລັກສະນະຂອງໄມ້ ແລະ ຜະລິດຕະພັນໄມ້ ແລະ 8 ຫຼັກສູດໄລຍະສັ້ນ)<br>- ສະເໜີກຳນົດເປົ້າໝາຍໃໝ່: ໃຫ້ການບໍລິການ 30 ຢ່າງ (17 ການບໍລິການແມ່ນສຳລັບທົດລອງຄຸນລັກສະນະຂອງໄມ້ ແລະ ຜະລິດຕະພັນໄມ້ ແລະ 13 ຫຼັກສູດໄລຍະສັ້ນ)<br>- ສະເໜີກຳນົດກອບເວລາໃໝ່: 03/2027 |

# ຕ່ອງໂສ້ມູນຄ່າເພີ່ມ ຜົນງານທີ່ບັນລຸໄດ້

- ໄດ້ວ່າຈ້າງທີ່ປຶກສາ **ສອງທ່ານ ສໍາລັບວຽກງານຕ່ອງໂສ້ມູນຄ່າເພີ່ມ ປະຈໍາຢູ່ນະຄອນຫລວງວຽງຈັນ** ເຊິ່ງຮັບຜິດຊອບ i) ໃຫ້ຄໍາແນະນໍາແກ່ການຄຸ້ມຄອງໄມ້ ແລະ ທຸລະກິດເຄື່ອງປ່າຂອງດົງ ປະຈໍາຢູ່ກົມປ່າໄມ້ ສໍາລັບການຈັດຕັ້ງປະຕິບັດ ກິດຈະກໍາກ່ຽວກັບການເພີ່ມມູນຄ່າຕ່ອງໂສ້ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ii) ປະສານງານສໍາລັບກິດຈະກໍາຕ່າງໆ ຢູ່ໃນ 6 ແຂວງເປົ້າໝາຍ
- ໄດ້ວ່າຈ້າງທີ່ປຶກສາ **ສໍາລັບ 4 ແຂວງໃນຈໍານວນ 6 ແຂວງເປົ້າໝາຍ** (ຫລວງພະບາງ, ໄຊຍະບູລີ, ຫົວພັນ, ຄໍາມ່ວນ) ແລະ ໄດ້ສໍາເລັດການຈັດຫາສະຖານທີ່ເຮັດວຽກ ຢູ່ບັນດາຫ້ອງການຂອງລັດທີ່ກ່ຽວຂ້ອງ
- ໄດ້ກໍານົດ**ສະຖານທີ່ເຮັດວຽກ** ໃຫ້ແກ່ທີ່ປຶກສາທາງດ້ານວຽກງານຕ່ອງໂສ້ມູນຄ່າເພີ່ມ **ຢູ່ກົມປ່າໄມ້** ແລະ ກໍາລັງກຽມຄວາມພ້ອມສະຖານທີ່ດັ່ງກ່າວ (ກໍາລັງດໍາເນີນການ)
- ໄດ້ດໍາເນີນ**ການວິເຄາະທ່າແຮງ ແລະ ຄວາມຕ້ອງການ ຂອງຕ່ອງໂສ້ມູນຄ່າເພີ່ມກ່ຽວກັບປ່າໄມ້** ຢູ່ໃນ 6 ແຂວງເປົ້າໝາຍ ເຊັ່ນ ຄໍາມ່ວນ, ຫລວງພະບາງ, ຫົວພັນ, ອຸດົມໄຊ, ໄຊຍະບູລີ ແລະ ແຂວງວຽງຈັນ



# ຕ່ອງໂສ້ມູນຄ່າເພີ່ມ ສິ່ງທ້າທາຍ



- ຜູ້ຜະລິດສ່ວນຫລາຍຜະລິດສິນຄ້າ**ທີ່ມີການປຸງແຕ່ງແບບພື້ນຖານ**, ໂດຍສະເພາະແມ່ນເຄື່ອງປ່າຂອງດົງ ເຊິ່ງມີມູນຄ່າເພີ່ມໜ້ອຍກວ່າ ຖ້າ ທຽບໃສ່ຜະລິດຕະພັນສຳເລັດຮູບ
- ສປປ ລາວ ສ່ວນຫລາຍແມ່ນອີງໃສ່ **ຕະຫລາດພາຍໃນພາກພື້ນ** ໂດຍສະເພາະປະເທດຈີນ ແລະ ຫວຽດນາມ
- ເນື່ອງຈາກວ່າບໍ່ທັນມີໂຄງການອື່ນທີ່ GIZ ຈັດຕັ້ງປະຕິບັດຢູ່**ແຂວງ ວຽງຈັນ** ເທື່ອ, ດັ່ງນັ້ນທີ່ປຶກສາດ້ານຕ່ອງໂສ້ມູນຄ່າເພີ່ມ ທີ່ຈະມາປະຈຳໃນຕໍ່ໜ້າຈະຕ້ອງກະກຽມຄວາມພ້ອມ ແລະ ປະສານການຈັດຕັ້ງປະຕິບັດກິດຈະກຳຢູ່ໃນຂັ້ນແຂວງ ແລະ ຂັ້ນເມືອງສາກ່ອນ

#TEAMEUROPE

# ຕ່ອງໂສ້ມູນຄ່າເພີ່ມ ບົດຮຽນທີ່ຖອດຖອນໄດ້

- ສະເພາະຂົງເຂດການຮ່ວມມືທີ່ໄດ້ນຳສະເໜີໃໝ່ ສິ່ງສຳຄັນແມ່ນຕ້ອງ**ຮູ້ຈັກເຊິ່ງກັນ ແລະ ກັນ** ເພື່ອສ້າງ**ຄວາມເຊື່ອໝັ້ນ**ລະຫວ່າງບັນດາຄູ່ຮ່ວມໂຄງການ
- **ການພົວພັນ ຢ່າງເປັນປະຈຳ ແລະ ສະໝໍ່າສະເໝີ** ກັບບັນດາຄູ່ຮ່ວມງານແຕ່ລະຂັ້ນ ແມ່ນມີຄວາມສຳຄັນຫຼາຍ ເພື່ອຮັບປະກັນວ່າ ການຈັດຕັ້ງປະຕິບັດກິດຈະກຳຂອງອົງປະກອບ ຈະໄດ້ຮັບຊຸກຍູ້ໃນໄລຍະຍາວ
- ການທີ່ມີ ທີ່ປຶກສາດ້ານການສ້າງມູນຄ່າເພີ່ມໜຶ່ງທ່ານ **ປະຈຳ ຢູ່ແຕ່ລະແຂວງ ໃນ 6 ແຂວງເປົ້າໝາຍ** ແລະ ມີສະຖານທີ່ເຮັດວຽກຢູ່ໃກ້ກັບຄູ່ຮ່ວມງານມີແມ່ນເປັນສິ່ງທີ່ສຳຄັນ
- ການສ້າງ **ໂຄງຮ່າງຄະນະຊີ້ນຳໂຄງການ** ແລະ ການ**ແຕ່ງຕັ້ງຜູ້ປະສານງານໂຄງການ** ຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ ແມ່ນມີຄວາມສຳຄັນຫຼາຍ ເພື່ອການປະສານງານ ແລະ ຊີ້ນຳການຈັດຕັ້ງປະຕິບັດບັນດາກິດຈະກຳ ຢ່າງມີປະສິດທິຜົນ



# ຕ່ອງໂສ້ມູນຄ່າເພີ່ມ ແຜນວຽກໃນຕໍ່ໄປ



- ຈັດຈ້າງທີ່ປຶກສາປະຈຳດ້ານການສ້າງມູນຄ່າເພີ່ມ ໃຫ້ແກ່ສອງແຂວງທີ່ຍັງເຫຼືອ ( **ແຂວງວຽງຈັນ ແລະ ອຸດົມໄຊ**)
- ສ້າງ**ແຜນດຳເນີນງານ** ໂດຍອີງໃສ່ຜົນຂອງການວິເຄາະດ້ານຄວາມຕ້ອງການ ແລະ ທ່າແຮງ ຂອງການເພີ່ມມູນຄ່າຕ່ອງໂສ້ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ
- ຈັດ**ກອງປະຊຸມກັບພາກສ່ວນກ່ຽວຂ້ອງ** ເພື່ອນຳສະເໜີ ແລະ ປຶກສາຫາລື ຜົນຂອງການວິເຄາະ ແລະ ແຜນດຳເນີນງານ
- ຈັດຕັ້ງການ**ແຂ່ງຂັນດ້ານນະວັດຕະກຳ**
- ສືບຕໍ່ສະໜັບສະໜູນ ກິດຈະກຳກ່ຽວກັບ ຕົ້ນໝາກຈອງ (**malva nut tree**) ຢູ່ແຂວງຈຳປາສັກ ແລະ ອັດຕະປື (ໂດຍຮ່ວມມືກັບ ຜົນໄດ້ຮັບ 1)

# ຕ່ອງໂສ້ມູນຄ່າເພີ່ມ

## ຜົນໄດ້ຮັບ 5) ຕ່ອງໂສ້ມູນຄ່າເພີ່ມແບບຍືນຍົງ ແລະ ມີການແຂ່ງຂັນຂອງຜະລິດຕະພັນຈາກປ່າໄມ້ໄດ້ຖືກປັບປຸງໃຫ້ເຂັ້ມແຂງ.

| ຕົວຊີ້ວັດຜົນໄດ້ຮັບ EU | ຂໍ້ມູນເບື້ອງຕົ້ນ | ເປົ້າໝາຍ | ສະເໜີການປ່ຽນແປງ |
|---|---|---|---|
| 5.1) ຈຳນວນຊາວກະສິກອນຂະໜາດນ້ອຍ (% ທີ່ເປັນແມ່ຍິງ) ທີ່ມີສ່ວນຮ່ວມໃນຕົວແບບການຜະລິດໂດຍນຳໃຊ້ປ່າໄມ້ ເຂົ້າຮ່ວມໃນແນວຄວາມຄິດລິເລີ່ມເພື່ອປັບປຸງການເຂົ້າເຖິງຕະຫຼາດ. | 0 ຊາວກະສິກອນ (ປະຈຸບັນຍັງບໍ່ມີການສະໜັບສະໜູນດ້ານການເພີ່ມມູນຄ່າຕ່ອງໂສ້ຜະລິດຕະພັນຈາກປ່າໄມ້ເທື່ອ) | ຊາວກະສິກອນ 500 ຄົນ, 30 % ແມ່ນແມ່ຍິງ (12/2026) | - ສະເໜີປັບປຸງເນື້ອໃນຄືນໃໝ່: ປ່ຽນ “ຊາວກະສິກອນຂະໜາດນ້ອຍ" ເປັນ “ຜູ້ຜະລິດ"<br>- ສະເໜີກຳນົດກອບເວລາໃໝ່: 03/2027 |
| 5.2) ຈຳນວນ MSME ທີ່ມີແຜນທຸລະກິດສຳລັບການຜະລິດແບບຍືນຍົງ ໂດຍສອດຄ່ອງກັບມາດຕະຖານຄວາມຍືນຍົງ. | 0 MSME (ປະຈຸບັນຍັງບໍ່ໄດ້ໃຫ້ຄຳແນະນຳກ່ຽວກັບແຜນທຸລະກິດ ແລະ ການເງິນ ເພື່ອເພີ່ມຜະລິດຕະພາບເທື່ອ) | 20 MSME (12/2025) | - ສະເໜີກຳນົດກອບເວລາໃໝ່: 03/2027 |

# ຕ່ອງໂສ້ມູນຄ່າເພີ່ມ

## ຜົນໄດ້ຮັບ 5) ຕ່ອງໂສ້ມູນຄ່າເພີ່ມແບບຍືນຍົງ ແລະ ມີການແຂ່ງຂັນຂອງຜະລິດຕະພັນຈາກປ່າໄມ້ໄດ້ຖືກປັບປຸງໃຫ້ເຂັ້ມແຂງ.

| ຕົວຊີ້ວັດຜົນໄດ້ຮັບ EU | ຂໍ້ມູນເບື້ອງຕົ້ນ | ເປົ້າໝາຍ | ສະເໜີການປ່ຽນແປງ |
|---|---|---|---|
| 5.3) ຈຳນວນຄູ່ຮ່ວມທຸລະກິດໃໝ່ໃນກຸ່ມຜູ້ຜະລິດຂະໜາດນ້ອຍ, MSMEs ແລະ ບໍລິສັດຂະໜາດໃຫຍ່ທີ່ຢູ່ໃນຕ່ອງໂສ້ການສະໜອງທີ່ຍືນຍົງ, ລວມທັງການເຮັດສັນຍາການປູກ. | 0 ຄູ່ຮ່ວມງານ (ຂອບເຂດທີ່ຈະຈັດຕັ້ງປະຕິບັດຢູ່ທ້ອງຖິ່ນ ເພື່ອຊຸກຍູ້ການສ້າງຄູ່ຮ່ວມທຸລະກິດ ແມ່ນຍັງຕ້ອງໄດ້ກຳນົດກ່ອນ) | 4 ຄູ່ຮ່ວມງານ (06/2024) | - ສະເໜີປັບປຸງເນື້ອໃນຄືນໃໝ່: ປ່ຽນ "ຊາວກະສິກອນຂະໜາດນ້ອຍ" ເປັນ "ຜູ້ຜະລິດ"<br>- ສະເໜີກຳນົດກອບເວລາໃໝ່: 03/2027 |
| 5.4) ຈຳນວນເມືອງທີ່ມີ (ຜູ້ຜະລິດຂະໜາດນ້ອຍ) ທີ່ໄດ້ຈົດທະບຽນສວນປູກ. | ຈະໄດ້ກຳນົດເມື່ອເລີ່ມໂຄງການ | 10 ເມືອງ (12/2026) | ສະເໜີໃຫ້ລຶບຕົວຊີ້ວັດຜົນໄດ້ຮັບນີ້ອອກ ເພາະວ່າມັນຖືກຈັດຕັ້ງປະຕິບັດໂດຍ KfW ແລ້ວ. |

#TEAMEUROPE

# ວາລະປະຊຸມ

1. ສະພາບລວມຂອງ ProFEB
2. ນະໂຍບາຍປ່າໄມ້
3. ການອະນຸລັກຊີວະນາໆພັນ
4. ການສຶກສາ ແລະ ຕ່ອງໂສ້ມູນຄ່າ
5. **ການຟື້ນຟູພູມີທັດປ່າໄມ້**





# ການຟື້ນຟູພູມີທັດປ່າໄມ້ (FLR)

## ຜົນໄດ້ຮັບ EU 4

ການເປັນຄູ່ຮ່ວມງານລະຫວ່າງພາກເອກະຊົນ, ຊາວບ້ານ, ພາກສ່ວນລັດ ແລະ ອົງການຈັດຕັ້ງທາງສັງຄົມ ສຳລັບ ການຟື້ນຟູຄວາມສົມດູນດິນຟ້າອາກາດ ໃນການອານຸລັກເຂດພູມີທັດປ່າໄມ້ ແລະ ຊີວະນາງພັນ ມີຄວາມເຂັ້ມແຂງເພີ່ມຂຶ້ນ

| ຕົວຊີ້ວັດຜົນໄດ້ຮັບ EU | ຂໍ້ມູນເບື້ອງຕົ້ນ | ເປົ້າໝາຍ | ການປັບປຸງແປງ |
|---|---|---|---|
| 4.1) ຈຳນວນກິດຈະກຳລິເລີ່ມໃນການເປັນຄູ່ຮ່ວມງານລະຫວ່າງພາກລັດ, ບໍລິສັດເອກະຊົນ ແລະ ຊາວບ້ານໃນການອະນຸລັກຊີວະນາງພັນໃນປ່າໄມ້ ແລະ ສົ່ງເສີມການເຊື່ອມຍົງກັບລະບົບນິເວດໃນລະດັບພູມີທັດ (ໃນທຸກປະເພດດິນ). | 0 ຄູ່ຮ່ວມງານ | 5 ຄູ່ຮ່ວມງານ (12/2025) | - ສະເໜີກຳນົດກອບເວລາຮອດ 12/2026<br>- ເອົາສະຖາບັນຄົ້ນຄວ້າເຂົ້າຮ່ວມເປັນຄູ່ຮ່ວມງານ |
| 4.2)ຈຳນວນກິດຈະກຳຟື້ນຟູປ່າໄມ້ບ້ານທີ່ເຊື່ອມຍົງເຂົ້າກັບຫຼາຍທາງເລືອກໃນການເຂົ້າເຖິງຕະຫຼາດ | 0 ປ່າໄມ້ | 30 ປ່າໄມ້(06/2026) | - ສະເໜີກຳນົດກອບເວລາຮອດ 06/2027 |
| 4.3) ຈຳນວນປະຊາຊົນຊາວບ້ານ (% ຂອງແມ່ຍິງ) ທີ່ຢືນຢັນໃຫ້ຮູ້ວ່າພວກເຂົາໄດ້ຮັບຜົນປະໂຫຍດຈາກການຟື້ນຟູພູມີທັດປ່າໄມ້ (FLR) | 0 ບ້ານ | | |

# ການຟື້ນຟູພູມີທັດປ່າໄມ້ (FLR) ຜົນງານທີ່ບັນລຸໄດ້

**ຜົນໄດ້ຮັບ 4:** ການເປັນຄູ່ຮ່ວມງານລະຫວ່າງພາກເອກະຊົນ, ຊາວບ້ານ, ພາກສ່ວນລັດ ແລະ ອົງການຈັດຕັ້ງທາງສັງຄົມ ສຳລັບ ການຟື້ນຟູຄວາມສົມດູນດິນຟ້າອາກາດ ໃນການອານຸລັກເຂດພູມີທັດປ່າໄມ້ ແລະ ຊີວະນາໆພັນ ໄດ້ມີຄວາມເຂັ້ມແຂງເພີ່ມຂຶ້ນ

- **ຜົນໄດ້ຮັບຕົວຊີ້ວັດ EU 4.1**: ຈຳນວນກິດຈະກຳລິເລີ່ມໃນການເປັນຄູ່ຮ່ວມງານລະຫວ່າງພາກລັດ, ບໍລິສັດເອກະຊົນ ແລະ ຊາວບ້ານໃນການອະນຸລັກຊີວະນາໆພັນໃນປ່າໄມ້ ແລະ ສົ່ງເສີມການເຊື່ອມຍົງກັບລະບົບນິເວດໃນລະດັບພູມີທັດ (ໃນທຸກປະເພດດິນ).
- ຂໍ້ມູນເບື້ອງຕົ້ນ: 0 ຄູ່ຮ່ວມງານ
- ເປົ້າໝາຍ: 5 ຄູ່ຮ່ວມງານ

**ຜົນງານທີ່ບັນລຸໄດ້:**

- ✓ ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ແຫ່ງຊາດ (NAFRI) ໄດ້ຈັດການຝຶກອົບຮົມກ່ຽວກັບການຟື້ນຟູພູມີທັດປ່າໄມ້ໃນແຂວງເປົ້າໝາຍ (ຫົວພັນ, ຫຼວງພະບາງ, ແລະ ໄຊຍະບູລີ).
- ✓ ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບນະໂຍບາຍ FLR ແລະ ເຄືອຄ່າຍຂອງບັນດາຜູ້ຈັດຕັ້ງປະຕິບັດ.



# ການຟື້ນຟູພູມີທັດປ່າໄມ້ (FLR) ຜົນງານທີ່ບັນລຸໄດ້



**ຜົນໄດ້ຮັບ 4:** ການເປັນຄູ່ຮ່ວມງານລະຫວ່າງພາກເອກະຊົນ, ຊາວບ້ານ, ພາກສ່ວນລັດ ແລະ ອົງການຈັດຕັ້ງທາງສັງຄົມ ສໍາລັບ ການຟື້ນຟູຄວາມສົມດູນດິນຟ້າອາກາດ ໃນການອານຸລັກຂດພູມີທັດປ່າໄມ້ ແລະ ຊີວະນາໆພັນ ໄດ້ມີຄວາມເຂັ້ມແຂງເພີ່ມຂຶ້ນ

➢ **ຕົວຊີ້ວັດຜົນໄດ້ຮັບ EU 4.2:** ຈໍານວນກິດຈະກໍາຟື້ນຟູປ່າໄມ້ບ້ານທີ່ເຊື່ອມຍິງເຂົ້າກັບຫຼາຍທາງເລືອກໃນການເຂົ້າເຖິງຕະຫຼາດ

- ຂໍ້ມູນເບື້ອງຕົ້ນ: ປ່າໄມ້ 0 ແຫ່ງ
- ເປົ້າໝາຍ: ປ່າໄມ້ 30 ແຫ່ງ

**ຜົນງານທີ່ບັນລຸໄດ້:**

- ການວິເຄາະພາຍໃນກ່ຽວກັບບັນດາບ້ານໃນໂຄງການ CliPAD ແລະ ການປຶກສາຫາລືກັບ PAFOs ກ່ຽວກັບບ້ານຕົວແບບ (ການເຊື່ອມສານເຂົ້າໃນຈໍານວນບ້ານທີ່ມີຄວາມຕ່າງກັນໃນການເຂົ້າຮ່ວມກິດຈະກໍາ)
- ໄດ້ເລີ່ມຕົ້ນການຮ່ວມມືກັບແຜນງານທີ່ດິນ ຂອງໂຄງການ GIZ ກ່ຽວກັບການຮັບຮູ້ສິດນໍາໃຊ້ທີ່ດິນ ໃນບັນດາບ້ານທີ່ມີພື້ນທີ່ທັບຊ້ອນ.

➢ **ຕົວຊີ້ວັດຜົນໄດ້ຮັບ EU 4.3: ຈໍານວນຊາວບ້ານ** (% ແມ່ຍິງ) ທີ່ຢືນຢັນວ່າພວກເຂົາ **ໄດ້ຮັບຜົນປະໂຫຍດຈາກການຟື້ນຟູພູມີທັດປ່າໄມ້** (FLR)

# ການຟື້ນຟູພູມີທັດປ່າໄມ້ (FLR)
# ສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້ ແລະ ແຜນວຽກໃນຕໍ່ໄປ

## ສິ່ງທ້າທາຍ:

- ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດປ່າໄມ້
- ສິ່ງທ້າທາຍໃນການຟື້ນຟູປ່າໄມ້ທີ່ມີໄລຍະໝູນວຽນສັ້ນສຳລັບການປູກພືດເສດຖະກິດ
- ຍັງບໍ່ທັນມີຍຸດທະສາດແຫ່ງຊາດສຳລັບການກຳນົດທ່າແຮງການຟື້ນຟູປ່າ, ຍັງບໍ່ທັນມີຄູ່ມືແນະນຳກ່ຽວກັບ FLR ແລະ ການຈັດຕັ້ງປະຕິບັດ; ມີພຽງໜຶ່ງໂຄງການທີ່ມີຄວາມສຳເລັດ, ແຕ່ບໍ່ທັນມີຍຸດທະສາດລວມ
- ຄວາມຮູ້ລະດັບອົງກອນຍັງມີຄວາມຈຳກັດກ່ຽວກັບຍຸດທະສາດການຟື້ນຟູປ່າ

## ບົດຮຽນທີ່ຖອດຖອນໄດ້:

- ຍັງມີຄວາມຈຳເປັນທີ່ຕ້ອງມີການປະສານງານກັບຫລາຍຂະແໜງການໃນແຕ່ລະແຂວງ ເພື່ອປະຕິບັດວິທີການແບບພູມີທັດ
- ກິດຈະກຳ FLR ທີ່ມີຢູ່ໃນບັນດາພື້ນທີເປົ້າໝາຍຂອງໂຄງການ CliPAD ຕ້ອງໄດ້ຮັບຄວາມເອົາໃຈໃສ່ຫລາຍຂຶ້ນ, ມີຄວາມຈຳເປັນຕ້ອງມີຄູ່ມືແນະນຳ ແລະ ງົບປະມານສຳລັບກິດຈະກຳ
- ຕ້ອງກຳນົດຄວາມຈະແຈ້ງກ່ຽວກັບການຈັດສັນທີ່ດິນເພື່ອການຟື້ນຟູປ່າໃໝ່ ໃນໄລຍະການວາງແຜນການການນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP)
- ເຂດປ່າຜະລິດອາດເປັນ ຕົວຢ່າງອັນໜຶ່ງທີ່ສຳຄັນສຳລັບການເຂົ້າຮ່ວມຂອງຊາວບ້ານໃນການອະນຸລັກ ແລະ ຟື້ນຟູປ່າໄມ້ຂອງລັດ



# ການຟື້ນຟູພູມິທັດປ່າໄມ້ (FLR)<br>ສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້ ແລະ ແຜນວຽກໃນຕໍ່ໄປ

## ແຜນວຽກໃນຕໍ່ໄປ:

- ປະເມີນໂອກາດການຟື້ນຟູປ່າໄມ້ເພື່ອກໍານົດບັນດາບ້ານ ຫລື ເຂດພູມິທັດເປັນຂັ້ນຕອນສຸດທ້າຍສໍາລັບການນໍາໃຊ້ມາດຕະການ FLR
- ປຶກສາຫາລືກ່ຽວກັບ FLR ກັບບັນດາຄູ່ຮ່ວມງານເພື່ອສ້າງຄູ່ມືແນະນໍາ
- ທົດລອງ FLR ໂດຍອີງໃສ່ຫລັກການທາງດ້ານວິທະຍາສາດ
- ເຮັດວຽກກັບສະຖາບັນການສຶກສາກ່ຽວກັບການຟື້ນຟູປ່າ ທີ່ກ່ຽວຂ້ອງກັບບັນດາກິດຈະກໍາທີ່ສະໜັບສະໜູນຍຸດທະສາດການຟື້ນຟູປ່າໄມ້ໃນລະດັບສູນກາງ ແລະ ທ້ອງຖິ່ນ
- ການພັດທະນາ ແລະ ອໍານວຍຄວາມສະດວກສໍາລັບການສ້າງຮູບແບບການໃຫ້ທຶນສະໜັບສະໜູນ ແລະ ການຄຸ້ມຄອງຄູ່ຮ່ວມງານ ເພື່ອການຟື້ນຟູ ແລະ ອະນຸລັກປ່າໄມ້ໂດຍເຊື່ອມໂຍງກັບບັນດາກິດຈະກໍາຟື້ນຟູປ່າໄມ້ເຂົ້າກັບບັນດາທາງເລືອກການເຂົ້າເຖິງຕະຫລາດ.

#TEAMEUROPE

# ຂອບໃຈທີ່ທ່ານຮັບຟັງ

**ຜູ້ສາມາດພົວພັນ ແລະ ຕິດຕໍ່ເອົາຂໍ້ມູນເພີ່ມ:**


Dr. Martin Nowack
ຫົວໜ້າໂຄງການ
ໂຄງການປົກປັກຮັກສາ ແລະ ນໍາໃຊ້ລະບົບນິເວດປ່າໄມ້ ແລະ ຊີວະນາໆພັນແບບຍືນຍົງ (ProFEB)
Deutsche Gesellschaft für Internationale Zusammenarbeit (GIZ) GmbH
P.O. Box 9233, ວຽງຈັນ, ສປປ ລາວ

ທີ່ຢູ່: GIZ-ProFEB ຫ້ອງການວຽງຈັນ
ບ້ານສີດໍາດວນ, ຖະໜົນອາຊຽນ, ນະຄອນຫລວງວຽງຈັນ.

T: +856 21 253 824
E: martin.nowack@giz.de

I: GIZ ProFEB https://www.giz.de/en/worldwide/66110.html
I: FLEGT: https://flegtlaos.com/
I: Hin Name No: https://hinnamno.org/
I: Lao Wildlife Heroes https://laowildlifeheroes.org/




#StrongerTogether